# ສະພາບເສດຖະກິດ ແລະ ທິດທາງການເຕີບໂຕເພື່ອ ຄວາມຢືນຢົງ ແລະ ສີຂຽວ

ບົດລາຍງານກ່ຽວກັບຜົນການສົນທະນາ ກຸ່ມທີ 1

*ໂດຍ ທ່ານ ປອ. ສະຖາບັນດິດ ອິນຊສີຊຽງໃໝ່*

*ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ*

# ສິ່ງທ້າທາຍທີ່ສຳຄັນ

- ຄວາມບໍ່ມີສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ເຊັ່ນ: ອັດຕາເງິນເຟີ້, ອັດຕາແລກປ່ຽນ, ໜີ້ສິນ, ການເກັບລາຍຮັບທີ່ບໍ່ເຕັມເມັດເຕັມໜ່ວຍ, ການຄຸ້ມຄອງດ້ານການເງິນ;
- ຄຸນນະພາບການເຕີບໂຕ ທີ່ຕິດພັນກັບການກະຈາຍລາຍຮັບ ແລະຜົນປະໂຫຍດ ໄປສູ່ພາກສ່ວນຕ່າງໆທາງສັງຄົມ ຍັງບໍ່ທັນທົ່ວເຖິງ ແລະບໍ່ຮັບປະກັນຄວາມຍືນຍົງ ເຊັ່ນ: ສະພາບການປ່ຽນແປງການລົງທຶນ, ຄວາມຫຼາກຫຼາຍຂອງການຜະລິດ, ການສ້າງວຽກເຮັດງານທຳ, ການລົງທຶນດ້ານສາທາລະນະ, ການເຄື່ອນຍ້າຍອອກຂອງແຮງງານ);
- ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ເຊິ່ງມີຜົນຕໍ່ເສດຖະກິດຂອງ ສປປ ລາວ ໂດຍສະເພາະການຜະລິດກະສິກຳ, ໄພທຳມະຊາດ, ການອະນຸລັກທຳມະຊາດ ແລະ ການສູນເສຍຊີວະນາໆພັນ, ການຜະລິດພະລັງງານທີ່ພຽງພໍ, ການດຳລົງຊີວິດ, ການບຸກລຸກທີ່ດິນ, ການທຳລາຍປ່າ ແລະອື່ນໆ.

# ຄຳແນະນຳ ແລະ ວິທີການໃນຕໍ່ໜ້າ

ແຜນສະເພາະໜ້າ

- ຮັບປະກັນການລະດົມແຫຼ່ງລາຍຮັບ ແລະສ້າງສະຖຽນລະພາບທາງດ້ານເງິນຕາ ທີ່ຕິດພັນກັບ ການປັບປຸງລະບອບລະບຽບໃນການເກັບອາກອນລາຍໄດ້, ອາກອນມູນຄ່າເພີ່ມ, ຫຼຸດຜ່ອນການຍົກເວັ້ນພາສີອາກອນຕ່າງໆ ເພື່ອສ້າງລາຍຮັບເພີ່ມຂຶ້ນ ລວມທັງ ການເກັບພາສີອາກອນສິນຄ້າຟູມເຟືອຍຕ່າງໆ ເຊັ່ນ: ອາກອນຢາສູບ ແລະສິນຄ້າຟູມເຟືອຍອື່ນໆ ເຊິ່ງເປັນມາດຕະການທີເລັ່ງໃຫ້ມີການແກ້ໄຂໃນໄລຍະກາງ ເພື່ອເຮັດໃຫ້ມີຖານລາຍຮັບຫຼາຍຂຶ້ນ;
- ການແກ້ໄຂໜີ້ສິນ ແລະການປັບໂຄງສ້າງໜີ້ຕ່າງໆ ເຊິ່ງເປັນບັນຫາຮີບດ່ວນ ແລະທ້າທາຍ ທີ່ລັດຖະບານ ສປປ ລາວ ຕ້ອງເລັ່ງແກ້ໄຂ;
- ເພີ່ມທະວີການມີສ່ວນຮ່ວມ ໃນການປະສົມທຶບ ລະຫວ່າງ ພາກລັດ-ເອກະຊົນ, ການສ້າງຄວາມໂປ່ງໃສ ແລະສ້າງການແຂ່ງຂັນ ເຊິ່ງຕິດພັນກັບການໄຂແກ້ບັນຕ່າງໆທີພາກເອກະຊົນໄດ້ຍົກຂຶ້ນ ເຊັ່ນ: ການສ້າງສະພາບແວດລ້ອມໃນການລົງທຶນ ແລະການປັບປຸງນິຕິກຳຕ່າງໆ ຕ້ອງໄດ້ປະສານສົມທົບກັບເອກະຊົນ, ຕ້ອງໄດ້ພະຍາຍາມສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ລວມທັງແກ້ໄຂຂໍ້ສະເໜີຕ່າງໆທີພາກເອກະຊົນຍົກຂຶ້ນໃຫ້ຂາດໂຕ;
- ຈັດສັນ ແລະປະຕິບັດລະບອບລາຍຈ່າຍ ຢ່າງມີປະສິດທິຜົນ ເພື່ອໃຫ້ການໃຊ້ຈ່າຍຂອງພາກລັດມີຄວາມທົ່ວເຖິງ ແລະກະຈາຍໄປທົ່ວທຸກຂົງເຂດທາງດ້ານສັງຄົມ.

# ແຜນໄລຍະຍາວ (ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 10)

- ສຸມໃສ່ແຜນພັດທະນາເສດຖະກິດ-ສັງຄົມ 5ປີຄັ້ງທີ 10 ເພື່ອປະຕິຮູບທາງດ້ານເສດຖະກິດ ເຊັ່ນ: ສຸມໃສ່ການລົງທຶນມະນຸດ ບໍ່ວ່າຈະເປັນການສຶກສາ,ສາທາລະນະສຸກ, ແຮງງານ ແລະ ອື່ນໆ;
- ປັບປຸງສະພາບແວດລ້ອມທາງການດຳເນີນທຸລະກິດ ເພື່ອດຶງດູດເງິນຕາຕ່າງປະເທດ ເພື່ອແກ້ໄຂບັນຫາເສດຖະກິດ ເຊິ່ງໃນນັ້ນສຳຄັນແມ່ນເມັດເງິນຈາກການລົງທຶນຈາກພາກເອກະຊົນ;
- ການປັບຕົວເຂົ້າສູ່ການປ່ຽນແປງຂອງດິນຟ້າອາກາດ ແລະ ການຫຼຸດຜ່ອນຜົນກະທົບ ລວມທັງ  ການຊອກຫາແຫຼ່ງທຶນສີຂຽວ ເພື່ອເຮັດໃຫ້ການພັດທະນາມີຄວາມຍືນຍົງ.



# ຂໍຂອບໃຈ